ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 05/ພນ

ນະຄອນຫຼວງວຽງຈັນ, ວັນທີ 31 ມັງກອນ 2023

# ຄໍາແນະນໍາ
# ກ່ຽວກັບ ການສ້າງກົດລະບຽບຂອງບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກໍາ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດໍາລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມການປົກຄອງທ້ອງຖິ່ນ ສະບັບເລກທີ 07/ປທ, ລົງວັນທີ 12 ມັງກອນ 2023.

## ລັດຖະມົນຕີ ອອກຄໍາແນະນໍາ:

## I. ຈຸດປະສົງ ແລະ ຄາດໝາຍ

### 1. ຈຸດປະສົງ

1.1. ເພື່ອກໍານົດຄວາມໝາຍ, ທິດນໍາ, ຂັ້ນຕອນການສ້າງ ແລະ ປັບປຸງກົດລະບຽບຂອງບ້ານ ໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ສອດຄ່ອງກັບສະພາບຕົວຈິງ;

1.2. ຮັບປະກັນຄວາມຍຸຕິທໍາ, ປົກປ້ອງສິດຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ ແລະ ສັງຄົມພາຍໃນບ້ານ;

1.3. ເຮັດໃຫ້ການຄຸ້ມຄອງບໍລິຫານບ້ານ ມີປະສິດທິພາບ, ປະສິດທິຜົນ ແລະ ຫັນເຂົ້າສູ່ລະບຽບຫຼັກການ.

### 2. ຄາດໝາຍ

2.1. ປະຊາຊົນດໍາລົງຊີວິດ ແລະ ເຄື່ອນໄຫວໄດ້ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ສອດຄ່ອງກັບຮີດຄອງປະເພນີ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະອາດສວຍງາມ, ມີຄວາມປອດໄພໃນຊີວິດ ແລະ ຊັບສິນ, ປາສະຈາກປະກົດການຫຍໍ້ທໍ້ຕ່າງໆ ແລະ ສາມາດດໍາລົງຊີວິດ ດ້ວຍຄວາມສະຫງົບສຸກ;

2.2. ປະຊາຊົນມີຄວາມຮັບຮູ້ເຂົ້າໃຈ, ມີການປະກອບສ່ວນຢ່າງເປັນເຈົ້າການໃນການຈັດຕັ້ງປະຕິບັດ;

2.3. ມີການສົ່ງເສີມການຈັດຕັ້ງປະຕິບັດກົດໝາຍ ແລະ ສ້າງສະຕິເຄົາລົບກົດໝາຍຢູ່ຂັ້ນຮາກຖານ.

## II. ຄວາມໝາຍ

ກົດລະບຽບຂອງບ້ານແມ່ນນິຕິກໍາ ຊຶ່ງອົງການປົກຄອງບ້ານວາງອອກ ເພື່ອຈັດຕັ້ງປະຕິບັດນິຕິກໍາຂອງອົງການລັດຂັ້ນເທິງ ຫຼື ເພື່ອຄຸ້ມຄອງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

## III. ທິດນຳ

1. ເນື້ອໃນຕ້ອງສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳຂອງຂະແໜງການ ຫຼື ນິຕິກຳທີ່ສູງກວ່າ, ຈຸດພິເສດ, ທ່າແຮງ ແລະ ຜົນປະໂຫຍດລວມຂອງບ້ານ;

2. ເນື້ອໃນກົດລະບຽບບ້ານຕ້ອງຕິດພັນກັບສິ່ງເນື້ອໃນ ສີ່ຄາດໝາຍ;

3. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ເສີມຂະຫຍາຍປະຊາທິປະໄຕ ແລະ ລະດົມຄຳເຫັນຢ່າງກວ້າງຂວາງ;

4. ມີໂຄງປະກອບທີ່ເໝາະສົມ, ເນື້ອໃນ, ຄຳສັບ, ສຳນວນ, ຄຳເວົ້າທີ່ນຳໃຊ້ ຕ້ອງມີຄວາມໝາຍທີ່ແນ່ນອນ, ຮັດກຸມ, ຊັດເຈນເຂົ້າໃຈງ່າຍ ແລະ ຖືກຕ້ອງເໝາະສົມກັບສະພາບຕົວຈິງໃນແຕ່ລະທ້ອງຖິ່ນ.

## IV. ຂັ້ນຕອນການສ້າງ ແລະ ຮັບຮອງເອົາກົດລະບຽບຂອງບ້ານ

ກົດລະບຽບຂອງບ້ານ ສ້າງຂຶ້ນບົນພື້ນຖານທີ່ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ. ການສ້າງ ແລະ ປັບປຸງກົດລະບຽບຂອງບ້ານແຕ່ລະຄັ້ງຕ້ອງປະຕິບັດຕາມຂັ້ນຕອນລະອຽດ ດັ່ງລຸ່ມນີ້:

1. ນາຍບ້ານ ແຕ່ງຕັ້ງ ແລະ ແບ່ງງານພາຍໃນຄະນະຮັບຜິດຊອບສ້າງ ຫຼື ປັບປຸງກົດລະບຽບຂອງບ້ານ ຊຶ່ງປະກອບມີ:

| | |
|---|---|
| – ນາຍບ້ານ | ເປັນຫົວໜ້າ; |
| – ຮອງນາຍບ້ານ | ເປັນຮອງ; |
| – ອົງການຈັດຕັ້ງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ | ເປັນຄະນະ; |
| – ບັນດາໜ່ວຍງານຊ່ວຍວຽກບ້ານ | ເປັນຄະນະ; |
| – ພາກສ່ວນອື່ນໆທີ່ຈຳເປັນ | ເປັນຄະນະ. |

2. ຄະນະຮັບຜິດຊອບຄົ້ນຄວ້າສ້າງ ຫຼື ປັບປຸງເນື້ອໃນກົດລະບຽບຂອງບ້ານ ແລະ ສະເໜີຕໍ່ອົງການປົກຄອງບ້ານ;

3. ອົງການປົກຄອງບ້ານເປີດກອງປະຊຸມບ້ານ ເພື່ອປຶກສາຫາລືປະກອບຄຳເຫັນ ເພື່ອເອກະພາບຕໍ່ຮ່າງກົດລະບຽບຂອງບ້ານ;

4. ອົງການປົກຄອງບ້ານສົມທົບກັບຫ້ອງການພາຍໃນ ເພື່ອກວດແກ້, ແນະນຳ ພ້ອມທັງສະເໜີຂໍຄຳເຫັນຈາກຫ້ອງການຍຸຕິທຳ;

5. ຫ້ອງການພາຍໃນສະເໜີຫ້ອງວ່າການ ເພື່ອນຳສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຮັບຮອງ;

6. ປະກາດ ແລະ ເຜີຍແຜ່ແນະນຳຈັດຕັ້ງປະຕິບັດ.

## V. ເນື້ອໃນໂຄງຮ່າງພື້ນຖານຂອງລະບຽບບ້ານ

ເນື້ອໃນໂຄງຮ່າງກົດລະບຽບຂອງບ້ານແມ່ນໃຫ້ຕິດພັນກັບພາລະບົດບາດ, ສິດໜ້າທີ່ຄວາມຮັບຜິດຊອບ ຂອງອົງການປົກຄອງບ້ານ ແລະ ໜ່ວຍງານຊ່ວຍວຽກບ້ານ.

ນອກຈາກທີ່ກ່າວມາຂ້າງເທິງນັ້ນແລ້ວ ໃນການຮ່າງກົດລະບຽບຂອງບ້ານຈະຕ້ອງເອົາໃຈໃສ່ ບັນຫາ ດັ່ງນີ້:

**1. ການກຳນົດຂອບເຂດ ແລະ ເປົ້າໝາຍການນຳໃຊ້**

ການກຳນົດຂອບເຂດ ແລະ ເປົ້າໝາຍການນຳໃຊ້ຂອງກົດລະບຽບຂອງບ້ານ ແມ່ນຕ້ອງໃຫ້ມີຄວາມຮັດກຸມ, ສາມາດຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດລວມຂອງບ້ານ, ຂອງປະຊາຊົນບັນດາເຜົ່າ ແລະ ມີຜົນບັງຄັບໃຊ້ສະເພາະຂອບເຂດພາຍໃນບ້ານ.

**2. ການກຳນົດຄ່າບໍລິການດ້ານເອກະສານ ແລະ ພັນທະຕ່າງໆຂອງບ້ານ**

ການກຳນົດຄ່າບໍລິການດ້ານເອກະສານ ຕ້ອງຄົ້ນຄວ້າກຳນົດຢ່າງລະອຽດ, ຮັດກຸມ, ສອດຄ່ອງກັບລະບຽບການໂດຍຜ່ານການເຫັນດີຮັບຮອງຈາກຂັ້ນເທິງ.

ການກຳນົດພັນທະຕ່າງໆ ຕ້ອງມີຄວາມເອກະພາບ, ສົມເຫດສົມຜົນ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

3. ການກຳນົດນະໂຍບາຍ

ການກຳນົດນະໂຍບາຍຢູ່ໃນກົດລະບຽບຂອງບ້ານເປັນສິ່ງໜຶ່ງທີ່ສຳຄັນ, ຜູ້ທີ່ເອົາໃຈໃສ່ເຄົາລົບ ແລະ ປະຕິບັດກົດລະບຽບບ້ານໄດ້ດີ ຕ້ອງໄດ້ຮັບການຍ້ອງຍໍສັນລະເສີນ ຫຼື ມີນະໂຍບາຍໃດໜຶ່ງທີ່ເໝາະສົມ.

ນອກຈາກນີ້, ກໍ່ຕ້ອງໃຫ້ຄຳນຶງເຖິງນະໂຍບາຍຕໍ່ກັບຜູ້ທີ່ທຸກຍາກຂາດເຂີນ, ຜູ້ເຖົ້າຜູ້ແກ່, ຜູ້ເສຍອົງຄະ, ຜູ້ມີລູກໄປເປັນທະຫານພັນທະຮັບໃຊ້ຊາດ, ຜູ້ທຳປະໂຫຍດ ຫຼື ເສຍສະຫຼະໃຫ້ແກ່ບ້ານ.

ການອອກກົດລະບຽບຂອງບ້ານແມ່ນບໍ່ໃຫ້ມີເປົ້າໝາຍ ເພື່ອການຫາລາຍໄດ້ ແລະ ສ້າງຄວາມຫຍຸ້ງຍາກສັບສົນໃຫ້ແກ່ການດຳລົງຊີວິດຂອງປະຊາຊົນ.

4. ການກຳນົດມາດຕະການ

ການກຳນົດມາດຕະການ ແມ່ນວິທີການໜຶ່ງ ເພື່ອເຮັດໃຫ້ບຸກຄົນຕ້ອງເຄົາລົບ ແລະ ປະຕິບັດຕາມກົດລະບຽບຂອງບ້ານ. ການກຳນົດມາດຕະການຕ້ອງໃຫ້ສົມເຫດສົມຜົນ, ບໍ່ໜັກ ຫຼື ເບົາເກີນໄປ ແລະ ຕ້ອງຢູ່ບົນພື້ນຖານທີ່ບໍ່ຂັດກັບກົດໝາຍ ຊຶ່ງການໃຊ້ມາດຕະການມີຫຼາຍຮູບການທີ່ແຕກຕ່າງກັນ ເປັນຕົ້ນ ການໃຊ້ແທນ, ການປັບໄໝຕ້ອງກຳນົດຂອບເຂດສູງສຸດ, ການປະຕິບັດກິດຈະກຳ ທີ່ເປັນສາທາລະນະປະໂຫຍດໃຫ້ບ້ານ ແລະ ອື່ນໆ.

## VI. ການຈັດຕັ້ງປະຕິບັດ

1. ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;

2. ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ;

3. ພະແນກພາຍໃນ, ຫ້ອງການພາຍໃນ ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ໃນການຜັນຂະຫຍາຍ, ຊຸກຍູ້, ຕິດຕາມການ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ເປັນປົກກະຕິ;

4. ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກພົບເຫັນຄວາມຫຍຸ້ງຍາກ ໃຫ້ສະເໜີລາຍງານພາກສ່ວນທີ່ກ່ຽວຂ້ອງຕາມຂັ້ນຕອນ ເພື່ອພິຈາລະນາ;

5. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳແນະນຳ ສະບັບເລກທີ 10/ພນ, ລົງວັນທີ 24 ສິງຫາ 2016 ກ່ຽວກັບການສ້າງກົດລະບຽບບ້ານ.

ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ

ເອກະສານຊ້ອນທ້າຍ: *ຮ່າງຕົວຢ່າງຮູບແບບກົດລະບຽບຂອງບ້ານ*

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງ, ເທດສະບານ, ນະຄອນ

ບ້ານ.............

ເລກທີ. . . /. . .

ທີ່......... ວັນທີ. . . ເດືອນ. . .ປີ...

# (ຮ່າງຕົວຢ່າງ) ຮູບແບບ
# ກົດລະບຽບຂອງບ້ານ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ............., ລົງວັນທີ................;
- ອີງຕາມ ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ...................., ລົງວັນທີ................;
- ອີງຕາມ ໜັງສືຮັບຮອງເອົາກົດລະບຽບບ້ານຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ສະບັບເລກທີ.../......., ລົງວັນທີ ............;
- ອີງຕາມ ..........................................................................................................

**ນາຍບ້ານ ອອກກົດລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດລະບຽບສະບັບນີ້ສ້າງຂຶ້ນ ເພື່ອເປັນເຄື່ອງມືເປັນບ່ອນອີງໃຫ້ແກ່ອຳນາດການປົກຄອງບ້ານໃນການຄຸ້ມຄອງບໍລິຫານບ້ານໃຫ້ຫັນເຂົ້າສູ່ລະບຽບກົດໝາຍ ແລະ ສາມາດຮັກສາໄວ້ຄວາມສາມັກຄີ, ຄວາມສະເໝີພາບ ແລະ ກໍ່ໃຫ້ເກີດຜົນປະໂຫຍດລວມຂອງປະຊາຊົນບັນດາເຜົ່າພາຍໃນບ້ານ.

**ມາດຕາ 2 ອະທິບາຍຄຳສັບ (ຖ້າມີ)**

**ມາດຕາ 3 ຂອບເຂດ ແລະ ເປົ້າໝາຍການນຳໃຊ້**

## ໝວດທີ 2
## ວຽກງານພັກ-ອົງການຈັດຕັ້ງມະຫາຊົນ

**ມາດຕາ 4 ການເຂົ້າຮ່ວມເຄື່ອນໄຫວກິດຈະກຳຂອງອົງການຈັດຕັ້ງມະຫາຊົນ**

ປະຊາຊົນພາຍໃນບ້ານ ຜູ້ທີ່ເປັນສະມາຊິກຂອງອົງການຈັດຕັ້ງມະຫາຊົນ ຕ້ອງໄດ້ເຂົ້າຮ່ວມເຄື່ອນໄຫວກິດຈະກຳຕ່າງໆຂອງອົງການຈັດຕັ້ງດັ່ງກ່າວຈັດຂຶ້ນ.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ........................

**ມາດຕາ 5** ........................

## ໝວດທີ 3
## ວຽກງານບໍລິຫານ-ການປົກຄອງ

**ມາດຕາ 6 ການມີສ່ວນຮ່ວມຂອງປະຊາຊົນ**

ປະຊາຊົນພາຍໃນບ້ານ ຕ້ອງໃຫ້ການຮ່ວມມື ຫຼື ມີສ່ວນຮ່ວມຕໍ່ວຽກງານລວມຂອງບ້ານເຊັ່ນ: ການປະຕິບັດລະບຽບການຂອງອົງການປົກຄອງ, ການປະຕິບັດພັນທະຕ່າງໆ ຫຼື ການປະກອບສ່ວນໃນວຽກງານລວມຂອງບ້ານ.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ........................

**ມາດຕາ 7** ........................

## ໝວດທີ 4
## ວຽກງານເສດຖະກິດ-ການເງິນ

**ມາດຕາ 8 ການດຳເນີນທຸລະກິດ**

ແຕ່ລະຄອບຄົວທີ່ທຳມາຫາກິນຄ້າຂາຍ ຫຼື ປະກອບອາຊີບຕ່າງໆຕ້ອງປະຕິບັດຕາມຂັ້ນຕອນລະບຽບກົດໝາຍທີ່ໄດ້ກຳນົດເຊັ່ນ: ການຂໍອະນຸຍາດຂຶ້ນທະບຽນ, ການເສຍພັນທະຕ່າງໆໃຫ້ລັດ.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ........................

**ມາດຕາ 9** ........................

## ໝວດທີ 5
## ວຽກງານວັດທະນະທຳ-ສັງຄົມ

**ມາດຕາ 10 ການສຶກສາ**

ແຕ່ລະຄອບຄົວຕ້ອງເອົາໃຈໃສ່ຕໍ່ການສຶກສາຮ່ຳຮຽນຂອງລູກຫຼານ, ເດັກທີ່ເຖິງເກນອາຍຸຮຽນ ຕ້ອງສົ່ງເຂົ້າໂຮງຮຽນ, ຫ້າມເອົາລູກອອກໂຮງຮຽນກາງປີ ຫຼື ອອກກ່ອນຈົບປະຖົມ.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ........................

**ມາດຕາ 11 ສາທາລະນະສຸກ**

ຕ້ອງຮັກສາອະນາໄມສາມສະອາດ, ຫ້າມຖິ້ມຂີ້ເຫຍື້ອສິ່ງເນົ່າເໝັນຕາມສະຖານທີ່ຕ່າງໆ ລວມທັງສະຖານທີ່ສາທາລະນະທີ່ຈະສ້າງຄວາມເປິເປື້ອນ ແລະ ເປັນມົນລະພິດຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ........................

**ມາດຕາ 12** ........................

## ໝວດທີ 6
## ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

**ມາດຕາ 13 ການຄຸ້ມຄອງພົນລະເມືອງ**

ຖ້າຄອບຄົວໃດມີການເຄື່ອນເໜັງຂອງສະມາຊິກພາຍໃນຄອບຄົວຕ້ອງແຈ້ງໃຫ້ ປກສ ບ້ານ ພາຍໃນເວລາທີ່ກຳນົດຕາມລະບຽບຂອງພາກສ່ວນກ່ຽວຂ້ອງ ເພື່ອຈົດເຂົ້າສຳມະໂນຄົວ ເຊັ່ນ: ການເກີດ, ການຕາຍ, ໄດ້ໄພ້ ໄດ້ເຂີຍ ຫຼື ຍົກຍ້າຍມາແຕ່ບ່ອນອື່ນ, ລູກແຍກອອກ ເຮືອນໃໝ່ ຫຼື ຍົກຍ້າຍອອກໄປຢູ່ບ່ອນອື່ນ.

ຫ້າມເອົາຄົນແປກໜ້າ ຫຼື ຄົນທີ່ບໍ່ຮູ້ຈັກປະຫວັດມາແຈ້ງພັກເຊົາ ແລະ ເຊື່ອງຊ້ອນຄົນບໍ່ດີ ໄວ້ໃນຄອບຄົວ.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ.......................

**ມາດຕາ 14 ການຮັກສາປຶ້ມສຳມະໂນຄົວ**

ແຕ່ລະຄອບຄົວຕ້ອງຮັກສາປຶ້ມສຳມະໂນຄົວບໍ່ໃຫ້ເປິເປື້ອນ, ບໍ່ໃຫ້ຈີກຂາດ, ບໍ່ໃຫ້ມີການຂີດຂຽນໃດໆໃສ່ໃນປຶ້ມສຳມະໂນຄົວດ້ວຍຕົນເອງຢ່າງເດັດຂາດ; ຖ້າປຶ້ມສຳມະໂນຄົວມີຄວາມເສຍຫາຍຄືດັ່ງກ່າວຕ້ອງໄດ້ເຮັດປຶ້ມຫົວໃໝ່.

ຖ້າຫາກຜູ້ໃດບໍ່ປະຕິບັດຕ້ອງ.......................

**ມາດຕາ 15 ການຄຸ້ມຄອງການເໜັງຕີງຕ່າງໆ**

ຄອບຄົວໃດທີ່ມີການປ່ຽນແປງຂອງສະມາຊິກຄອບຄົວເຊັ່ນ: ການເກີດ, ການຕາຍ, ການຍົກຍ້າຍ ແລະ ອື່ນໆ ແມ່ນໃຫ້ມາແຈ້ງຕໍ່ໜ່ວຍ ແລະ ປກສ ບ້ານພາຍໃນໄລຍະເວລາ ທີ່ກຳນົດຕາມລະບຽບ ຖ້າຜູ້ໃດລະເມີດຕ້ອງໄດ້ປະຕິບັດ ຕາມມາດຕະການດັ່ງນີ້:

ຄັ້ງທີ 1. ສຶກສາອົບຮົມ

ຄັ້ງທີ 2. ໃຊ້ມາດຕະການ. . . . ພ້ອມທັງໃຫ້ເຮັດບົດບັນທຶກ

**ມາດຕາ 16 ການລັກ, ທຳຮ້າຍຮ່າງກາຍ, ທຳລາຍຊັບສິນສ່ວນບຸກຄົນ ແລະ ສ່ວນລວມ**

ກໍລະນີເບົາບາງຈະໄດ້ຖືກສຶກສາອົບຮົມ ແລະໃຊ້ແທນ . . . . . ... ໃນກໍລະນີຮ້າຍແຮງ ແມ່ນສົ່ງໃຫ້ເຈົ້າໜ້າທີ່ຂັ້ນເທິງດຳເນີນຄະດີຕາມລະບຽບກົດໝາຍ.

**ມາດຕາ 17 ການຫຼິ້ນການພະນັນ**

ບໍ່ໃຫ້ມີການຫຼິ້ນການພະນັນ ຫຼື ອຳນວຍຄວາມສະດວກໃນການຫຼິ້ນການພະນັນທຸກປະເພດ ຫາກຜູ້ໃດລະເມີດ:

ຄັ້ງທີ 1. ສຶກສາອົບຮົມ ແລະ ໃສ່ມາດຕະການຕໍ່ຜູ້ຫຼິ້ນ........, ຜູ້........, ເຈົ້າຂອງສະຖານທີ່........

ຄັ້ງທີ 2. ຖ້າຍັງສືບຕໍ່ຫຼິ້ນແມ່ນປະກອບສຳນວນສົ່ງໃຫ້ຂັ້ນເທິງດຳເນີນຄະດີຕາມກົດໝາຍ.

**ມາດຕາ 18 ການທະເລາະວິວາດຕີກັນ**

ຫ້າມບໍ່ໃຫ້ມີການຜິດຖຽງ ອາລະວາດຕີກັນ ຖ້າຜູ້ໃດລະເມີດ:

ຄັ້ງທີ 1. ແມ່ນຖືກ ສຶກສາອົບຮົມ ແລະ ໃຊ້ມາດຕະການ. . . . . . ພ້ອມທັງເຮັດບົດບັນທຶກ

ຄັ້ງທີ 2. ສົ່ງໃຫ້ຂັ້ນເທິງດຳເນີນຄະດີ.

**ມາດຕາ 19** ........................

## ໝວດທີ 7
## ນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ນະໂຍບາຍ**

ປະຊາຊົນທຸກຄົນ ທີ່ປະຕິບັດກົດລະບຽບໄດ້ດີຈະໄດ້ຮັບການພິຈາລະນາຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ**

ປະຊາຊົນທຸກຄົນ ທີ່ລະເມີດຕໍ່ກົດລະບຽບບ້ານ ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ໃສ່ມາດຕະການຕາມລະບຽບ........................

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ອົງການປົກຄອງບ້ານ, ຫົວໜ້າໜ່ວຍຄອບຄົວ ເປັນເຈົ້າການໃນການເຜີຍແຜ່ແນະນຳໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ກົດລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນຮັບຮອງ.

ກົດລະບຽບ, ຂໍ້ກຳນົດສະບັບອື່ນຂອງບ້ານທີ່ຂັດກັບກົດລະບຽບສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ນາຍບ້ານ**

ເຊັນ ແລະ ປະທັບຕາ